LALCO
LAO ASEAN LEASING PUBLIC COMPANY

ບົດບັນທຶກ ກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022 ຂອງ ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ

ວັນ, ເວລາ ແລະ ສະຖານທີ່

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 13 ກັນຍາ 2022 ເວລາ 13:30 ຕອນແລງ, ທີ່ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ຊັ້ນ 1, ຕຶກ NNN, ຖະໜົນ, ບ້ານໂພນສີນວນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ.

ເລີ້ມເປີດກອງປະຊຸມ

ບໍລິສັດ ລາວອາຊຽນ ເຊົ່າສິນເຊື່ອ ມະຫາຊົນ, ເປັນວັນປິດປຶ້ມເພື່ອ ກຳນົດຜູ້ຖືຫຸ້ນຂອງບໍລິສັດ ທີ່ມີສິດເຂົ້າຮ່ວມ ກອງປະຊຸມສາມັນຜູ້ຖືຮຸ້ນ ວັນທີ 30 ສິງຫາ 2022, ມີທຶນຈົດທະບຽນທີ່ຖອກແລ້ວ 30,150,000,000ກີບ, ເຊິ່ງເປັນ ຕົວແທນໃຫ້ແກ່ 301,500,000 ຮຸ້ນທີ່ອອກໃຫ້. ໃນຕອນເລີ່ມຕົ້ນຂອງກອງປະຊຸມ, ປະກອບມີຜູ້ຖືຫຸ້ນ 15 ທ່ານ ເຂົ້າ ຮ່ວມໂດຍ ຜູ້ຖືຮຸ້ນມອບສິດໃຫ້ຜູ້ຕ່າງໜ້າເຂົ້າຮ່ວມແທນ, ເຊິ່ງລວມເປັນ 297,880,800 ຮຸ້ນ ຫຼື 98,80%, ເຊິ່ງຫຼາຍ ກວ່າເຄິ່ງໜຶ່ງ ຂອງຮຸ້ນທັງໝົດ ທີ່ອອກໃຫ້.

ທ່ານ Yoshihito Oshima ຜູ້ທີ່ໄດ້ຮັບມອບໝາຍ ຈາກທ່ານນາງ Yuki Scott, ປະທານສະມາຊິກສະພາ ບໍລິຫານ ໃຫ້ເປັນປະທານກອງປະຊຸມ ແລະ ປະກາດກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022 ທີ່ຈັດຂຶ້ນ ໂດຍການ ຕ້ອນຮັບທຸກພາກສ່ວນ ທີ່ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຫຸ້ນປະຈຳປີ 2022 ຊຶ່ງມີລາຍລະອຽດດັ່ງນີ້:

ພິທີກອນໄດ້ແນະນຳ ຜູ້ອຳນວຍການຂອງບໍລິສັດ, ຜູ້ອຳນວຍການຝ່າຍບໍລິຫານ ແລະ ພະນັກງານ ທີ່ກ່ຽວຂ້ອງທີ່ ເຂົ້າຮ່ວມກອງປະຊຸມດັ່ງນີ້:

ສະມາຊິກສະພາບໍລິຫານ

ຊື່	ຕຳແໜ່ງ	ມອບໝາຍໃຫ້
ທ່ານນາງ. Yuki Scott	ປະທານສະພາບໍລິຫານ	ທ່ານ Yoshihito Oshima
ທ່ານ. Mitsuteru Nagaya	ຮອງປະທານສະພາບໍລິຫານ	ທ່ານນາງ ສຸກດາວັນ
ທ່ານ. Shingo Yamanaka	ສະມາຊິກ	ທ່ານນາງ ຈີ້ເຮ່

LALCO
LAO ASEAN LEASING PUBLIC COMPANY

ທ່ານ. Hirofumi Inada	ສະມາຊິກ	ທ່ານນາງ ອໍາເພັ່ງ ສຸກທະວີ
ທ່ານນາງ. Harumi Ide	ສະມາຊິກ	ທ່ານນາງ ຕາວັນ ວົງຫາຈັນ

ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ທ່ານນາງ. ວັນນະພອນ ສຸນັນທາ	ຜູ້ຕ່າງໜ້າຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານ ເພັດດາລາ ຈັນສີແສງສະຫວັນ	ຜູ້ຕ່າງໜ້າຈາກ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານນາງ ມະທິການ ອິນທະວົງ	ຜູ້ຕ່າງໜ້າຈາກ ຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມສາມັນຜູ້ຖືຮຸ້ນ
ທ່ານນາງ. ເກສອນ ເທບພາສຸວັນ	ຜູ້ຖືຮຸ້ນລາຍຍ່ອຍຂອງ ລອຊ, ໃນນາມຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມສາມັນຜູ້ຖືຮຸ້ນ

ພິທີກອນ	ທ່ານນາງ ຈີລີ ລີເລ່ຍນູ / ທ່ານນາງ ນຸດທະມາດ ບຸດຕະວົງ
ພະນັກງານຕ້ອນຮັບ	ທ່ານນາງ. ເມດຕາ ສີສຸວົງ
ພະນັກງານກວດສອບເອກະສານ	ທ່ານນາງ. ລູ້ລີ ລີເລ່ຍນູ
ພະນັກງານລົງທະບຽນ	ທ່ານນາງ. ຈິນຕະນາ ນາຄະປະເສີດ
ກອງເລຂາ	ທ່ານນາງ. ລຸນນີ ແກ້ວປະທຸມ
ພະນັກງານລົງຄະແນນສຽງ	ທ່ານ ໄຊພອນ ໄຊຍະວົງ
ພະນັກງານລະບົບອີເລັກໂຕນິກ	ທ່ານ ໄຊພອນ ໄຊຍະວົງ

LALCO
LAO ASEAN LEASING PUBLIC COMPANY

ຫລັງຈາກນັ້ນ, ພິທີກອນ ໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມແລະລາຍງານແຕ່ລະວາລະຂອງກອງປະຊຸມດັ່ງຕໍ່ໄປນີ້:

1. **ການລົງຄະແນນສຽງ:**

- ທ່ານຜູ້ຖືຫຸ້ນໜຶ່ງທ່ານ ມີຄະແນນສຽງເຊິ່ງເທົ່າກັບຈຳນວນຮຸ້ນທັງໝົດ ຂອງທ່ານ; ໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງແຕ່ວາລະ, ຈະໄດ້ສອບຖາມຖ້າວ່າມີຜູ້ຖືຫຸ້ນຜູ້ທີ່ບໍ່ເຫັນດີ ຫຼືບໍ່ຮອງຮອງໃນວາລະນັ້ນ. ໃນກໍລະນີທີ່ ບໍ່ເຫັນດີຫລືບໍ່ຮັບຮອງ ແມ່ນໃຫ້ ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ເຊິ່ງໄດ້ແຈກຢາຍໂດຍເຈົ້າໜ້າທີ່ກ່ອນການປະຊຸມ ພ້ອມທັງຕ້ອງໄດ້ຍົກບັດຂຶ້ນມາຈົນກວ່າເຈົ້າໜ້າທີ່ຈະເກັບກຳຂໍ້ມູນ ເພື່ອໄປກວດນັບຄະແນນສຽງໃນວາລະນັ້ນ ແລະ ສຳລັບຜູ້ຖືຫຸ້ນທີ່ບໍ່ຍົກບັດຂຶ້ນມາ, ຖືວ່າຜູ້ຖືຮຸ້ນດັ່ງກ່າວເຫັນດີກັບມະຕິທີ່ໄດ້ສະເໜີໃນກອງປະຊຸມ.

2. **ການນັບຄະແນນສຽງ**

- ການນັບຄະແນນສຽງສຳລັບແຕ່ລະວາລະແມ່ນອີງໃສ່ຈຳນວນສຽງ (ຈຳນວນຮຸ້ນ)ຂອງຜູ້ຖືຮຸ້ນ ຫຼື ຕາງໜ້າຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ໂດຍບໍລິສັດ ໄດ້ບັນທຶກລ່ວງໜ້າແລ້ວ.

- ຈະປະກາດຜົນການລົງຄະແນນສຽງຈາກແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ພາຍຫຼັງທີ່ ການລົງຄະແນນສຽງແຕ່ລະຄັ້ງໄດ້ສິ້ນສຸດລົງ. ໃນກໍລະນີ ຜູ້ຖືຫຸ້ນໄດ້ລົງຄະແນນສຽງບໍ່ເຫັນດີ ພາຍຫຼັງທີ່ປະທານປະກາດຄະແນນສຽງໃຫ້ກອງປະຊຸມເມື່ອວາລະປະຊຸມສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ ນັບເອົາຄະແນນສຽງດັ່ງກ່າວ.

LAO ASEAN LEASING PUBLIC COMPANY

ພິທີກອນສືບຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໂດຍລາຍງານແຕ່ລະວາລະ ດັ່ງຕໍ່ໄປນີ້:

ວາລະ 1: ພິຈາລະນາ ແລະ ຮັບຮອງການຈ່າຍເງິນປັນຜົນ ຈາກກຳໄລສະສົມຮອດທ້າຍປີ 2021.

- ຄວາມຄິດເຫັນຂອງສະພາບໍລິຫານ:
- ຕີກລົງເຫັນດີສະເໜີ ຜູ້ຖືຮຸ້ນຄວນອະນຸມັດການຈ່າຍເງິນປັນຜົນຈາກກຳໄລສະສົມຮອດທ້າຍປີ 2021 ຈຳນວນ 570,027,606,419 ກີບ
- ສຳລັບການຈ່າຍເງິນປັນຜົນແມ່ນຈະແບ່ງຈ່າຍເປັນຫຼາຍຄັ້ງເນື່ອງຈາກກຳໄລສະສົມເປັນຈຳນວນຫຼາຍ,
- ວັນທີ່ ຈ່າຍເງິນປັນຜົນ ແລະ ວັນປິດປຶ້ມບັນຊີຜູ້ຖືຮຸ້ນເພື່ອຮັບເງິນປັນຜົນໃນແຕ່ລະຄັ້ງແມ່ນ ບໍລິສັດຈະແຈ້ງເປັນລາຍຫຼັງອີກສອນໃຫ້ຕະຫຼາດຫຼັກຊັບລາວຕາມການອະນຸມັດຂອງສະພາບໍລິຫານ.

ຫຼັງຈາກສະເໜີໂດຍຫຍໍ້ແລ້ວ ໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີ ຄຳເຫັນ ຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີ ຄຳເຫັນ ຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງເຫັນດີກັບ 297.880.800 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

<u>ມະຕິ:</u> **ກອງປະຊຸມໄດ້ຮັບຮອງ ແລະ ອະນຸມັດການຈ່າຍເງິນປັນຜົນ ຈາກກຳໄລສະສົມຮອດທ້າຍປີ 2021.**

ວາລະ 2: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ Yoshihito Oshima ເປັນສະມາຊິກສະພາບໍລິຫານຄົນໃໝ່, , ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຜູ້ອຳນວຍການໃຫຍ່ (ເປັນຕົວແທນທາງດ້ານກົດໝາຍ ທີ່ອອກຊື່ໃນໃບທະບຽນວິສາຫະກິດ ຄົນໃໝ່), ເປັນ ປະທານເຈົ້າໜ້າທີ່ບໍລິຫານ .

- **ຄວາມຄິດເຫັນຂອງສະພາບໍລິຫານ:**
- ເຫັນດີ ນຳ ສະເໜີ ໃຫ້ຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງ ທ່ານ **Yoshihito Oshima** ເປັນ ສະມາຊິກສະພາບໍລິຫານຄົນໃໝ່, , ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຜູ້ອຳນວຍການໃຫຍ່ (ເປັນຕົວແທນທາງດ້ານກົດໝາຍ ທີ່ອອກຊື່ໃນໃບທະບຽນວິສາຫະກິດ ຄົນໃໝ່), ເປັນ ປະທານເຈົ້າໜ້າທີ່ບໍລິຫານ ແທນ ທ່ານ **Shingo Yamanaka** ທີ່ໄປຮັບໜ້າທີ່ໃໝ່.

ໃນກອງປະຊຸມຈະຮັບຮອງເອົາ ຕ້ອງລົງຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຄະແນນສຽງທັງໝົດໃນກອງປະຊຸມ.

ປະທານໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສະເໜີຄຳເຫັນຫຼື ຄຳຖາມຕໍ່ວາລະນີ້ ແລະ ບໍ່ມີຜູ້ຖືຮຸ້ນໃດມີຄຳເຫັນຫຼື ຄຳຖາມ.

ພາຍຫຼັງທີ່ໄດ້ພິຈາລະນາບັນຫາດັ່ງກ່າວ, ກອງປະຊຸມໄດ້ລົງຄະແນນສຽງບໍ່ເຫັນດີກັບ 0 ຄະແນນສຽງຫຼື 0% ຂອງຜູ້ເຂົ້າຮ່ວມກອງປະຊຸມແລະລົງຄະແນນສຽງເຫັນດີກັບ 297.880.800 ສຽງຫຼື 100% ຂອງຜູ້ເຂົ້າຮ່ວມກອງປະຊຸມ.

LALCO
LAO ASEAN LEASING PUBLIC COMPANY

ມະຕິ: ກອງປະຊຸມໄດ້ຮັບຮອງເອົາ ແລະ ອະນຸມັດການແຕ່ງຕັ້ງ ທ່ານ **Yoshihito Oshima** ເປັນສະມາຊິກສະພາບໍລິຫານຄົນໃໝ່, , ປະທານຄະນະກຳມະການກ່ຽວກັບຄ່າຕອບແທນ, ປະທານຄະນະກຳມະການຄັດເລືອກ, ເປັນຜູ້ອຳນວຍການໃຫຍ່ (ເປັນຕົວແທນທາງດ້ານກົດໝາຍ ທີ່ອອກຊື່ໃນໃບທະບຽນວິສາຫະກິດ ຄົນໃໝ່), ເປັນ ປະທານເຈົ້າໜ້າທີ່ບໍລິຫານ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມ ໃນເວລາ 14:30 ຕອນແລງ.

ຜູ້ຕາງໜ້າທີ່ໄດ້ຮັບມອບໝາຍຈາກກອງປະຊຸມ

ບໍລິສັດ ລາວ ອາ ຊຽນ ເຊົ່າສິນເຊື່ອ ມະຫາຊົນ LAO ASEAN LEASING PUBLIC COMPANY

ທ່ານ Yoshihito Oshima

ຜູ້ບັນທຶກ

ນ ລຸ້ລີ ລີເລ່ຍນູ